ສົ່ງ: ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອແຈ້ງໃຫ້ສະມາຊິກສະຫະກອນອອມຊັບຊາບ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ທະນາຄານແຫ່ງ ສປປ ລາວ

ຄະນະຮັບຜິດຊອບສະຫະກອນອອມຊັບ ທຫລ

ເລກທີ..03.../ສວຊສພ . ທຫລ

ນະຄອນຫຼວງວຽງຈັນ, ວັນທີ 27 ມັງກອນ, 2017

ສຳນັກງານ ຄຄຊ
ເລກຮັບ 0125
ວັນທີ 31 JAN 2017
ໂທລະສັບ 021 217770

## ຂໍ້ຕົກລົງກ່ຽວກັບການປັບນະໂຍບາຍ
## ຂອງສະຫະກອນອອມຊັບຂອງທະນາຄານແຫ່ງ ສປປລາວ

- ອີງຕາມຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບສະຫະກອນອອມຊັບທຫລ ເລກທີ 901/ທຫລ ລົງວັນທີ03/12/2005
- ອີງຕາມຜົນຂອງກອງປະຊຸມຂອງຄະນະຮັບຜິດຊອບສະຫະກອນອອມຊັບທຫລ ຄັ້ງວັນທີ 13/1/2017
- ອີງຕາມການຄົ້ນຄວ້າແລະນຳສະເໜີຂອງຄະນະຮັບຜິດຊອບ ສະຫະກອນອອມຊັບທຫລ ຄັ້ງວັນທີ 24/1/2017

ຄະນະຮັບຜິດຊອບສະຫະກອນອອມຊັບທະນາຄານແຫ່ງ ສປປ ລາວ ຕົກລົງ:

ມາດຕາ1. ເພີ່ມວົງເງິນໃນການກູ້ຢືມສູງສຸດຂອງສະມາຊິກສະຫະກອນ ທຫລ ຈາກ 50 ລ້ານກີບມາເປັນ 70ລ້ານກີບ.ໃນການກູ້ຢືມຕົວຈິງແມ່ນອີງໃສ່ສັດສ່ວນຮຸ້ນ ແລະຄວາມສາມາດຊຳລະຕົວຈິງຂອງ ສະມາຊິກສະຫະກອນ.

ມາດຕາ 2. ດັດປັບອັດຕາດອກເບັ້ຍການກູ້ຢືມຂອງສະຫະກອນອອມຊັບທຫລຄື :1) ປັບຫລຸດອັດຕາດອກເບ້ຍເງິນກູ້ຢືມຂອງສະມາຊິກໄລຍະ 1ປີ ລົງມາ ຈາກ 8% ມາເປັນ 5% ຕໍ່ປີ ; 2) ປັບຫລຸດອັດຕາດອກເບ້ຍເງິນກູ້ຢືມ ຂອງສະມາຊິກສະຫະກອນ ໄລຍະ 1ປີ ຂຶ້ນໄປຈາກ 12% ມາເປັນ 8% ຕໍ່ປີ. ການປັບດອກເບັ້ຍແມ່ນໃຫ້ປະຕິບັດແຕ່ເດືອນ ກຸມພາ 2017 ເປັນຕົ້ນໄປ.

ມາດຕາ 3. ມອບໃຫ້ ຄະນະຮັບຜິດຊອບສະຫະກອນອອມຊັບ, ສະມາຊິກສະຫະກອນທີ່ສັງກັດຢູ່ ບັນດາກົມແລະທຽບເທົ່າ, ແລະພາກສ່ວນກ່ຽວຂ້ອງຈົ່ງຮັບຮູ້ແລະຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ເປັນຢ່າງດີ.

ມາດຕາ 4. ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຮອງຜູ້ວ່າການທະນາຄານແຫ່ງ ສປປລາວ

(ຜູ້ຊີ້ນຳວຽກງານສະຫະກອນອອມຊັບ ທຫລ)

ສອນໄຊ ສິດພະໄຊ

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19. ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la